| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດຕິດຕັ້ງປ້າຍໂຄສະນາ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| VCPG-PWTD-8 | 16.01.2018 | ພະແນກໂຍທາທິການ ແລະ ຂົນສົ່ງ, ນະຄອນຫລວງວຽງຈັນ |

## ຂໍ້ມູນພື້ນຖານ

| ຂໍ້ມູນພື້ນຖານ | |
|---|---|
| **ຮູບແບບການສົ່ງຄໍາຮ້ອງ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ** | ທຸກພາກສ່ວນ |
| **ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ** | ເພື່ອເຮັດໃຫ້ຕົວເມືອງມີຄວາມສະອາດ, ຈົບງາມ ແລະ ເປັນລະບຽບຮຽບຮ້ອຍ ຈໍາເປັນຕ້ອງໄດ້ມີການຄຸ້ມຄອງຕິດຕັ້ງປ້າຍໂຄສະນາ ລວມທັງ ເພື່ອປ້ອງກັນຜົນກະທົບດ້ານລົບຂອງປ້າຍໂຄສະນາດັ່ງກ່າວຕໍ່ສັງຄົມ (ເຊັ່ນ: ຜົນກະທົບຈາກການທີ່ປ້າຍດັ່ງກ່າວແມ່ນບົດບັງທ້ອງຟ້າ ຫຼື ທິວທັດໃດໜຶ່ງ ຫຼື ສ້າງມົນລະພິດທາງສາຍຕາ ລວມທັງ ຄວາມສ່ຽງຈາກການທີ່ປ້າຍໂຄສະນາດັ່ງກ່າວ ຈະເປ່ເພ ແລະ ຕົກລົງມາສ້າງຄວາມສ່ຽງຕໍ່ຊຸມຊົນໃກ້ຄຽງ) |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຕິດຕັ້ງປ້າຍໂຄສະນາທຸກປະເພດ ຊຶ່ງໝາຍເຖິງ ການຜະລິດທີ່ນໍາເອົາຊື່ສະເພາະ, ຮູບແຕ້ມ, ຮູບພາບ, ພາສາ, ສັນຍາລັກ, ສີສັນ ແລະ ເອເລັກໂຕນິກປະກອບເປັນປ້າຍ ໃນພື້ນທີ່ນະຄອນຫຼວງວຽງຈັນ |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ແມ່ນແລ້ວ |
| **ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ** | ໂດຍຫຼັກ, ໃບອະນຸຍາດນີ້ອອກໂດຍຂັ້ນແຂວງ ຍົກເວັ້ນ ປ້າຍທຸກຊະນິດ ລວມທັງປ້າຍເອເລັກໂຕຣນິກ ຊຶ່ງເປັນປ້າຍຕິດຕັ້ງແຄມທາງ ມີຂະໜາດບໍ່ເກີນ 2m x 4m. ແມ່ນອອກໂດຍຂັ້ນເມືອງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ** | 15 | ນິຕິກໍາກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໄວ້ ແຕ່ໄລຍະເວລາແມ່ນເປັນໄປຕາມ ເອກະສານຂັ້ນຕອນໃນການຂໍອະນຸຍາດຕິດຕັ້ງປ້າຍ ອອກໂດຍ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຄື: ໄວສຸດ 1 ອາທິດ, ຊ້າສຸດ 3 ອາທິດ |
| **ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ** | 1. ປ້າຍທີ່ຈະຕິດຕັ້ງ ຕ້ອງໄດ້ຮັບການກວດກາເນື້ອໃນຈາກຂະແໜງຖະແຫຼ່ງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ການຂໍອະນຸຍາດ ຕ້ອງສະເໜີກ່ອນມື້ຕິດຕັ້ງລ່ວງໜ້າ ຢ່າງໜ້ອຍ 7 ວັນ; 2. ຂະໜາດຂອງປ້າຍໂຄສະນາທີ່ຕັ້ງຕາມພື້ນທີ່ຕ່າງໆ ຕ້ອງເປັນໄປຕາມທີ່ລະບຸໄວ້ໃນ ຄໍາສັ່ງແນະນໍາ ເລກທີ 010/ຈນວ, ລົງວັນທີ 13 ກັນຍາ 2013; 3. ຜູ້ຂໍອະນຸຍາດຕິດຕັ້ງປ້າຍຂ້າມທາງ ແລະ | |

| **ຄຸນະສົມບັດ ແລະ ເອກະສານປະກອບ** | |
|---|---|
| | ປ້າຍຫ້ອຍຕາມເສົາໄຟ ຕ້ອງໄດ້ມັດຈຳເງິນໄວ້ ຕາມທີ່ກຳນົດໄວ້ ຂໍ້ກຳນົດເພີ່ມເຕີມ ເລກທີ 2638/ຍທຂ.ນວ. |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກຳນົດ ທີ່ໄດ້ກຳນົດໄວ້ພາຍໃຕ້ກົດໝາຍ. |

| **ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ** | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 1 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບອະນຸຍາດ** | 1. ການຕິດຕັ້ງປ້າຍຂ້າມທາງ ແລະ ປ້າຍຫ້ອຍແມ່ນອະນຸຍາດໃຫ້ບໍ່ເກີນ 7 ວັນ ແລະ ສາມາດຕໍ່ໄດ້ 1 ຄັ້ງ, ຖ້າຄົບຕາມກຳນົດເວລາທີ່ໄດ້ຂໍອະນຸຍາດແລ້ວ ຜູ້ຂໍອະນຸຍາດ ຫຼື ຜູ້ຕິດຕັ້ງປ້າຍຈະຕ້ອງໄດ້ເອົາປ້າຍລົງ ພາຍໃນ 1 ວັນ, ພ້ອມທັງແຈ້ງຕໍ່ຄະນະຜູ້ຮັບຜິດຊອບ ເພື່ອລົງກວດກາຢັ້ງຢືນ ແລະ ຮັບເງິນຄ້ຳປະກັນ. 2. ປ້າຍທີ່ຕິດຕັ້ງຕ້ອງໄດ້ຕໍ່ອະນຸຍາດປີຕໍ່ປີ ເພື່ອໃຫ້ທາງວິຊາການໄດ້ລົງກວດກາທາງດ້ານເຕັກນິກ ວ່າຍັງມີຄວາມປອດໄພ ຫຼືບໍ່ ຫຼື ມີການປ່ຽນແປງຫຍັງໃນແຕ່ລະປີ. |

| **ຄ່າທຳນຽມ** | | | | |
|---|---|---|---|---|
| **ມີຄ່າທຳນຽມແບບຟອມຄຳ ຮ້ອງ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ກະລຸນາຕື່ມຂໍ້ມູນ | | | |

| **ຄ່າທຳນຽມການຕໍ່ອາຍຸ** | | | | |
|---|---|---|---|---|
| **ມີຄ່າທຳນຽມແບບຟອມ ຄຳຮ້ອງຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ກະລຸນາຕື່ມຂໍ້ມູນ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ດຳລັດວ່າດ້ວຍປ້າຍ | 36/ລບ | 29.01.2016 | ໝວດທີ 5 ການກວດກາເນື້ອໃນ, ກຳນົດເວລານຳໃຊ້ປ້າຍ, ການນຳເຂົ້າ-ສົ່ງອອກ ແລະ ຕິດຕັ້ງປ້າຍ ມາດຕາ 26 ແລະ ມາດຕາ 32 ໝວດ 6 ຂໍ້ຫ້າມ |
| ຂໍ້ກຳນົດເພີ່ມເຕີມ ກ່ຽວກັບການຕິດຕັ້ງປ້າຍໂຄສະຍາແຄມທາງ ແລະ ປ້າຍຫ້ອຍຕາມເສົາໄຟ ຕາມຖະໜົນສາຍສຳຄັນຕ່າງໃນນະຄອນຫລວງວຽງຈັນ | 1439/ຍທຂ.ນວ | 23.04.2014 | |
| ຂໍ້ກຳນົດເພີ່ມເຕີມ ກ່ຽວກັບການຄຸ້ມຄອງປ້າຍຂ້າມທາງ,ປ້າຍຫ້ອຍເສົາ,ການມັດຈຳ ແລະ ການປັບໄໝ | 2638/ຍທຂ.ນວ | 01.08.2014 | |
| ຄຳສັ່ງແນະນຳ ວ່າດ້ວຍການຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍ ໃນການຈະລາຈອນຕາມເສັ້ນທາງ ການຄຸ້ມຄອງການປຸກສ້າງ-ສ້ອມແປງ ແລະ ການຕິດຕັ້ງປ້າຍໂຄສະນາຕ່າງໆ ໃນນະຄອນຫລວງວຽງຈັນ | 010/ຈນວ | 13.09.2013 | ຂໍ້ 5 ການຄຸ້ມຄອງປ້າຍໂຄສະນາຕ່າງໆ |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ເອກະສານອື່ນໆທີ່ກ່ຽວຂ້ອງ |
| ຂັ້ນຕອນໃນການຂໍອະນຸຍາດຕິດຕັ້ງປ້າຍ |

| ເອກະສານປະກອບ |
| --- |
| ບົດບັນທຶກກວດກາສະຖານທີ່ |
| ເນື້ອໃນຂອງປ້າຍ |
| ສັນຍາເຊົ່າທີ່ຕັ້ງສຳນັກງານ |
| ແຜນຜັງການກໍ່ສ້າງ |
| ໃບຢັ້ງຢືນທີ່ຢູ່ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 85 | 24 |
| 2016 | 159 | 0 |